Vientiane Mai
Monday, March 5, 2018
Page 1 & 9

# ສື່ມວນຊົນທັດສະນະສຶກສາ ໂຄງການຮ່ວມມືເພື່ອການພັດທະນາ




☆ ບັນນາທິການ ແລະ ນັກຂ່າວຈາກບັນດາສຳນັກງານສື່ມວນຊົນຂອງປະເທດລາວ ໄດ້ລົງຢ້ຽມຢາມໂຄງການຮ່ວມມື ເພື່ອພັດທະນາຂອງປະເທດຍີ່ປຸ່ນໃຫ້ແກ່ ສປປ ລາວ ຄື: ໂຄງການອາສາສະໝັກທີ່ໂຮງໝໍເມືອງທຸລະຄົມ ແລະ ໂຄງການຂະຫຍາຍກຳລັງການຜະລິດໄຟຟ້ານ້ຳງື່ມ 1 ຂຶ້ນວັນທີ 1 ມີນາ 2018 ຊຶ່ງຈັດໂດຍສະຖານທູດຍີ່ປຸ່ນຮ່ວມກັບຫ້ອງການໄຈກ້າປະຈຳ ສປປ ລາວ.

ທ່ານ ຄາຊຶຣິໂຣະຄຸໂນະ ອຸປະທູດ ຍີ່ປຸ່ນປະຈຳ ສປປ ລາວ ກ່າວວ່າ: ການທັດສະນະສຶກສາຄັ້ງນີ້ ແມ່ນເປັນເທື່ອທຳອິດນັບແຕ່ມີການສ້າງຕັ້ງສາຍພົວພັນທາງການທູດ ລະຫວ່າງ ຍີ່ປຸ່ນ ແລະ ສປປ ລາວ ໃນປີ 1955 ເປັນຕົ້ນມາ ເຊິ່ງການຊ່ວຍເຫຼືອເພື່ອການພັດທະນາຈາກຍີ່ປຸ່ນ ຫຼື ຮູ້ຈັກກັນໃນຊື່ ODA ແມ່ນຫົວໃຈສຳຄັນໃນສາຍພົວພັນຂອງຍີ່ປຸ່ນ

ອ່ານຕໍ່ໜ້າ ໗

## ສື່ມວນຊົນ...

ຕໍ່ກັບ ສປປ ລາວ.

ໂຄງການອາສາສະໝັກທີ່ໂຮງໝໍເມືອງທຸລະຄົມ ແຂວງວຽງຈັນ ກໍ່ແມ່ນໂຄງການໜຶ່ງທີ່ມີອາສາສະໝັກຍີ່ປຸ່ນໜຶ່ງທ່ານທີ່ມາປະຈຳ 2 ປີ ປັດຈຸບັນ ແມ່ນໄດ້ 1 ປີ 4 ເດືອນແລ້ວ ເປັນແພດຜະດຸງຄັນ ເຮັດໜ້າທີ່ກວດທ້ອງແມ່ມານ ແລະ ການເກີດລູກ ທັງໃຫ້ການປຶກສາຂອງແມ່ຍິງຖືພາ ໂຄງການດັ່ງກ່າວແມ່ນໄດ້ເລີ່ມມາແຕ່ປີ 1965 ເປັນຕົ້ນມາ ປັດຈຸບັນ ມີອາສາສະໝັກຈາກໄຈກ້າ ຈຳນວນ 56 ທ່ານ ຊຶ່ງຂະແໜງການທີ່ໄດ້ຮັບການຊ່ວຍເຫຼືອຫຼາຍທີ່ສຸດ ແມ່ນຂະແໜງກະສິກຳ ແລະ ປ່າໄມ້ ການສຶກສາ ແລະ ສາທາລະນະສຸກ.

ນອກຈາກນັ້ນ ກໍ່ໄດ້ໄປທັດສະນະສຶກສາໂຄງການຂະຫຍາຍເຂື່ອນໄຟຟ້ານ້ຳງື່ມ 1 ເຊິ່ງໂຄງການດັ່ງກ່າວເລີ່ມສ້າງຕັ້ງມາແຕ່ປີ 1968 ແລະ ສຳເລັດ ໃນປີ 1971 ໃຊ້ກ້ອນທຶນທັງໝົດ 28 ລ້ານໂດລາສະຫະລັດ ໂຄງການນ້ຳງື່ມ 1 ໄລຍະ 1 ແລະ ມີກຳລັງຕິດຕັ້ງ 195 ເມກາວັດ ໄລຍະ 2 ໄດ້ເລີ່ມລົງມືກໍ່ສ້າງ ໃນປີ 1976 ສຳເລັດ ໃນປີ 1978 ໃຊ້ທຶນທັງໝົດ 49 ລ້ານໂດລາສະຫະລັດ ແລະ ໄລຍະ 3 ໄດ້ເລີ່ມລົງມືກໍ່ສ້າງໃນປີ 1983 ແລະ ສຳເລັດໃນປີ 1984 ໃຊ້ທຶນທັງໝົດ 20 ລ້ານໂດລາສະຫະລັດ ສຳລັບໂຄງການຂະຫຍາຍກຳລັງຜະລິດໄຟຟ້າເຂື່ອນໄຟຟ້ານ້ຳງື່ມ 1 ແມ່ນໄດ້ຈັດຕັ້ງປະຕິບັດໄດ້ແລ້ວ 20% ຂອງໜ້າວຽກງານ ມີມູນຄ່າລົງທຶນ ທັງໝົດ 5.545.000.000 ເຢັນ ໂຄງການດັ່ງກ່າວສາມາດເພີ່ມທີ່ວໜ່ວຍຜະລິດພະລັງງານໄຟຟ້າອີກ 40 MW ຈະໃຫ້ສຳເລັດໃນປີ 2020.